ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONGTONGSAVAT RD , BAN PHONGTONGSAVAT, CHANTHABULY DISTRICT, VTE
OFFICE TEL: (+856 21) 415645, FAX / TEL: (+856 21) 262 984 , WWW.SOUVANNY.COM

ເລກທີ .1.8.0./SVN/2019
ນະຄອນຫຼວງວຽງຈັນ, ວັນທີ 09 ຕຸລາ 2019

ຮຽນ: ທ່ານ ວ່າການຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ທີ່ນັບຖື.
ທ່ານ ຜູ້ອໍານວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖື.

ເລື່ອງ: ການແຈ້ງມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2019.

- ອີງຕາມຂໍ້ຕົກລົງຂອງຄະນະກໍາມະການຄຸ້ມຄ້ອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 22/LSX ລົງວັນທີ 07 ມັງກອນ 2011.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ໄດ້ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2019 ເມື່ອວັນທີ 09 ຕຸລາ 2019 ເວລາ 14:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ (ຕລຊລ), ບ້ານ ໂພນທັນເໜືອ, ຖະໜົນ T4, ເມືອງ ໄຊເຊດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 78 ທ່ານ, ແບ່ງເປັນຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດ້ວຍຕົນເອງຈໍານວນ 39 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຈໍານວນ 39 ທ່ານ ຖືຮຸ້ນລວມ 149.766.400 ຮຸ້ນ ຄິດເປັນ 90,77 % ຂອງຈໍານວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມໄດ້ມີມະຕິດັ່ງນີ້:

1. **ພິຈາລະນາ ແລະ ຮັບຮອງບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2018;**
ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:
   - ເຫັນດີ 149.766.400 ສຽງ ຄິດເປັນ 100 % ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
   - ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
   - ລວມ 149.766.400 ສຽງ ຄິດເປັນ 100 %

2. **<u>ຂໍອະນຸມັດຂາຍສິ່ງເສດເຫຼືອປະເພດ ສິນຄ້າ ແລະ ຊັບສິນ ທີ່ຕິດພັນກັບພະແນກ ລີບ ແລະ ຂັ້ນໄດເລື່ອນ;</u>**
ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:
   - ເຫັນດີ 149.766.400 ສຽງ ຄິດເປັນ 100 % ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
   - ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
   - ລວມ 149.766.400 ສຽງ ຄິດເປັນ 100 %

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆ ດັ່ງນັ້ນ ປະທານຈຶ່ງກ່າວປິດກອງປະຊຸມເວລາ 15:00 ໂມງ, ຈຶ່ງຮຽນມາ ເພື່ອຊາບ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖື

ປະທານສະພາບໍລິຫານ
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ທ່ານ ອຸ່ນ ຫຼ້າສຸກັນ